ເລກທີ 18 /ສພທ.ທຄຕລ
ນະຄອນຫຼວງວຽງຈັນ, ລົງວັນທີ 17 ກັນຍາ 2021

ມະຕິ

- ອີງຕາມກົດລະບຽບຂອງ ທຄຕລ ເລກທີ 01/ທຄຕລ.2021, ລົງວັນທີ 21/05/2021;
- ອີງຕາມບົດບັນທຶກກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ ຄັ້ງທີ 3 ປະຈຳປີ 2021, ຄັ້ງວັນທີ 31/08/2021;
- ຕາມການເຫັນດີຂອງສະມາຊິກສະພາບໍລິຫານ ທຄຕລ ຕາມຈົດໝາຍວຽນເລກທີ 042/ທຄຕລ ລົງວັນທີ 16/09/2021.

ປະທານ ສະພາບໍລິຫານ (ທຄຕລ) ຕົກລົງເຫັນດີ
ຮັບຮອງການກະກຽມຈັດກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນປະຈຳປີ 2021 ດັ່ງນີ:

1. ຮັບຮອງເອົາກຳນົດມື້ປິດປຶ້ມບັນຊີຜູ້ຖືຮຸ້ນ (Record Date) ໃນວັນທີ **01/10/2021** ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈຳປີ 2021.
2. ວັນເວລາຈັດກອງປະຊຸມຜູ້ຖືຮຸ້ນ: **29/10/2021 (ເວລາ 14:30 ໂມງ)**
3. ສະຖານທີ່: ຫ້ອງປະຊຸມຊັ້ນ 3 ໂຮງແຮມເມືອງແຫ່ງ, ບ້ານໂພນສີນວນ, ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ;
4. ວາລະສຳຄັນທີ່ສະເໜີຮັບຮອງ: ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາ; ຮັບຮອງສະພາບໍລິຫານ ທຄຕລ ຊຸດໃໝ່; ຮັບຮອງການດັດແກ້ແຜນການປະຈຳປີ 2021 ຂອງ ທຄຕລ;

ດັ່ງນັ້ນ, ຈຶ່ງມີມະຕິຕົກລົງສະບັບນີ້ເພື່ອໃຫ້ ທຄຕລ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ປະທານສະພາບໍລິຫານ

ປອ. ບຸນເຫຼືອ ສິນໄຊວໍຣະວົງ